**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະພົວພັນຕ່າງປະເທດສູນກາງພັກ
ຫ້ອງການ

ເລກທີ : 1998 /ຄຕພ.ຫກ

ນະຄອນຫຼວງວຽງຈັນ, ວັນທີ : 25 SEP 2025

## ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ຄະນະພົວພັນຕ່າງປະເທດສູນກາງພັກ ຂໍເຊີນບັນດາ ບໍລິສັດ ຫຼື ຫ້າງຮ້ານ ທີ່ສົນໃຈສະໜອງໝໍ້ແປ່ງໄຟຟ້າ ຄວາມແຮງ 1,000 KVA ຈຳນວນ 1 ໜ່ວຍ ເພື່ອປະກອບໃສ່ຕຶກ ຄະນະພົວພັນຕ່າງປະເທດສູນກາງພັກ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ອະນຸຍາດໃຫ້ທຸກໆ ບໍລິສັດ ຫຼື ຫ້າງຮ້ານ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ຖືກຕ້ອງຕາມກົດໝາຍເຂົ້າຮ່ວມ;
4. ບໍລິສັດ ຫຼື ຫ້າງຮ້ານທີ່ມີມາດຖານທີ່ເໝາະສົມສົນໃຈ ສາມາດຕິດຕໍ່ພົວພັນໄດ້ທີ່ພະແນກຄຸ້ມຄອງ-ບໍລິຫານ, ຫ້ອງການຄະນະພົວພັນຕ່າງປະເທດສູນກາງພັກ ຫຼັກ 6, ບ້ານສີວິໄລ, ເມືອງໄຊທານີ ນະຄອງຫຼວງວຽງຈັນ ຫ້ອງ 214. ທ່ານ ຈໍຢ່າງ ເຊ່ຍລີ ເບີໂທລະສັບ 020 5556 6256 ແລະ ທ່ານ ໜູຜ່ອງ ສີຫາຈັກ ເບີໂທ 52392254. ມື້ເປີດຂາຍຊອງປະມູນ ວັນທີ 29 ກັນຍາ 2025 ຕາມໂມງລັດຖະການ ໃນລາຄາ 2,000,000 ກີບ/ຊອງ (ສອງລ້ານກີບ). ຖ້າບໍລິສັດໃດບໍ່ຊະນະການປະມູນ, ຫ້ອງການ ຄຕພ ຈະບໍ່ສົ່ງເງິນຄືນ;
5. ການຍື່ນຊອງປະມູນ ແມ່ນສົ່ງເຖິງພະແນກຄຸ້ມຄອງ-ບໍລິຫານ, ຫ້ອງການ ຄະນະພົວພັນຕ່າງປະເທດສູນກາງພັກ;
   - ຊອງປະມູນຕ້ອງສົ່ງກ່ອນ 9:00 ໂມງຂອງວັນທີ 04 ພະຈິກ 2025;
   - ການເປີດຊອງປະມູນຈະຈັດຂຶ້ນໃນວັນທີ 04 ພະຈິກ 2025 ເວລາ 9:00 ໂມງ, ໂດຍຊ່ອງໜ້າຄະນະກຳມະການຮັບຜິດ ຊອບການປະມູນ ແລະ ຕົວແທນຂອງບໍລິສັດ ຫຼື ຫ້າງຮ້ານຕ່າງໆ ທີ່ເຂົ້າຮ່ວມການແຂ່ງຂັນປະມູນ;
   - ສະຖານທີ່ ຫ້ອງປະຊຸມຊັ້ນ 02 ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ;
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນຈາກທະນາຄານ ເຊິ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄາປະມູນມາພ້ອມ ຫຼື ໜັງສືຄ້ຳປະກັນການປະມູນດ້ວຍກຽດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ບໍລິສັດ ຫຼື ຫ້າງຮ້ານ ທີ່ມີຄວາມສົນໃຈ ເພື່ອເຂົ້າຮ່ວມການປະມູນ ໃນຄັ້ງນີ້.

**ຫົວໜ້າຫ້ອງການ**

ຄັດສະພອນ ວົງໄພໂລດ